ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

*************

ທະນາຄານແຫ່ງ ສປປ ລາວ

ສະຫະກອນອອມຊັບພະນັກງານ ທຫລ

ນະຄອນຫຼວງວຽງຈັນ, ວັນທີ 01 JUN 2016

ສຳນັກງານ ຄຄຊ
ເລກທີ 0526
ວັນທີ 02 JUN 2016
ໂທລະສັບ 021 217770

## ແຈ້ງການ

**ເຖິງ:** - ບັນດາກົມ-ທຽບເທົ່າ ພາຍໃນທະນາຄານແຫ່ງ ສປປ ລາວ;

- ທະນາຄານແຫ່ງ ສປປ ລາວ ປະຈຳພາກ;
- ກອງທຶນປົກປ້ອງຜູ້ຝາກເງິນ.

**ເລື່ອງ:** ການກູ້ຢືມເງິນສະຫະກອນອອມຊັບພະນັກງານ ທຫລ.

- ອີງຕາມບົດບັນທຶກກອງປະຊຸມຂອງຄະນະກຳມະການຮັບຜິດຊອບວຽກງານສະຫະກອນອອມຊັບພະນັກງານ ທຫລ ຄັ້ງວັນທີ 17/05/2016.

ສະຫະກອນອອມຊັບພະນັກງານ ທຫລ ຂໍຖືເປັນກຽດແຈ້ງມາຍັງສະມາຊິກສະຫະກອນອອມຊັບພະນັກງານ ທຫລ ຊາບ ກ່ຽວກັບການກູ້ຢືມເງິນນຳສະຫະກອນ, ຈຸດປະສົງເພື່ອເຮັດໃຫ້ການເຄື່ອນໄຫວວຽກງານຂອງສະຫະກອນ ມີຄວາມເຂັ້ມແຂງ ແລະ ສະດວກຄ່ອງຕົວຂຶ້ນກວ່າເກົ່າ, ລາຍລະອຽດມີດັ່ງນີ້:

1. ການອະນຸມັດເງິນກູ້ຂອງສະມາຊິກ ຄະນະກຳມະການຮັບຜິດຊອບສະຫະກອນ ຈະໃຊ້ເວລາໃນການພິຈາລະນາ ອະນຸມັດເງິນກູ້ຢ່າງໜ້ອຍ 3 ວັນລັດຖະການ. ສະນັ້ນ, ພາຍຫຼັງສະມາຊິກຍື່ນເອກະສານຂໍກູ້ຢືມເງິນໄດ້ 3 ວັນ ຈຶ່ງໃຫ້ທວງຖາມຜົນການພິຈາລະນານຳຜູ້ຮັບຜິດຊອບບັນຊີ (ທ່ານ ນ. ສອນນາລີ ພົມມາໄຊ ຮອງຫົວໜ້າພະແນກ ກົມບັນຊີ-ການເງິນ ເບີໂທ 020 2222 8556 ຫຼື ຜູ້ຊ່ວຍວຽກບັນຊີ ທ່ານ ນ. ໄກ່ຄຳ ຫຼວງມຸນນີນທອນ ວິຊາການ ກົມບັນຊີ-ການເງິນ ເບີໂທ 020 2222 8554 ໃນຊ່ວງເວລາ 11:30-13:30 ໂມງ).
2. ຫ້າມບໍ່ໃຫ້ສະມາຊິກກູ້ຢືມເງິນໃຫ້ບຸກຄົນອື່ນ ຫຼື ຊຳລະແທນກັນ, ຫ້າມບໍ່ໃຫ້ມີການໂອນໜີ້ໃຫ້ບຸກຄົນອື່ນ. ກໍລະນີເກີດມີບັນຫາດັ່ງກ່າວເກີດຂຶ້ນ ສະຫະກອນອອມຊັບຈະບໍ່ຮັບຜິດຊອບແກ້ໄຂ ເຖິງວ່າຈະດ້ວຍເຫດຜົນໃດກໍ່ຕາມ ແລະ ສະມາຊິກທ່ານໃດຫາກກະທຳຄືດັ່ງກ່າວ ແມ່ນຈະຖືກພິຈາລະນາຕັດອອກຈາກການເປັນສະມາຊິກ.
3. ສະຫະກອນອອມຊັບ ໄດ້ປັບເພີ່ມຄ່າທຳນຽມເອກະສານຂໍກູ້ຢືມເງິນຂອງສະມາຊິກຈາກເດີມ 1.000 ກີບ ມາເປັນ 5.000 ກີບ ຕໍ່ຄັ້ງ, ເລີ່ມຈັດຕັ້ງປະຕິບັດນັບແຕ່ເດືອນ 06/2016 ເປັນຕົ້ນໄປ.
4. ຄະນະກຳມະການຮັບຜິດຊອບສະຫະກອນ ໄດ້ປັບປຸງແບບຟອມສະເໜີກູ້ຢືມເງິນ, ນັບແຕ່ເດືອນ 6/2016 ເປັນຕົ້ນໄປ ໃຫ້ສະມາຊິກນຳໃຊ້ແບບຟອມດັ່ງກ່າວເພື່ອສະເໜີຂໍກູ້ຢືມເງິນ, ລາຍລະອຽດແບບຟອມໄດ້ຄັດຕິດມາພ້ອມນີ້.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະຈັດຕັ້ງປະຕິບັດດ້ວຍ.

**ຫົວໜ້າຄະນະກຳມະການຮັບຜິດຊອບສະຫະກອນ**

ພາສີ ພົມມະກອນ

**ສະຫະກອນອອມຊັບ-ສິນເຊື່ອ ພະນັກງານທະນາຄານແຫ່ງ ສປປ ລາວ**

(ສ ອ ສ ທ ຫ ລ)

**ໃບສະເໜີຂໍກູ້ຢືມເງິນ**

1. ຂ້າພະເຈົ້າ.......................................................ອາຍຸ........ປີ, ເບີໂທຕິດຕໍ່..................................
   ມີຈຸດປະສົງຂໍກູ້ຢືມເງິນຈຳນວນ...............................ກີບ (................................................ກີບ)
   ເປົ້າໝາຍນຳໃຊ້ເງິນກູ້ຢືມນີ້ເພື່ອ...........................................................................................
   .........................................................................................................................................

2. ປະຈຸບັນຂ້າພະເຈົ້າເປັນພະນັກງານສັງກັດກົມ:...................................ທະນາຄານ.............................
   - ມີເງິນເດືອນປະຈຳ ເດືອນລະ...........................................ກີບ,
   - ລາຍໄດ້ອື່ນໆທີ່ໄດ້ຮັບປະມານ.................................ກີບ ຕໍ່ວັນ / ຕໍ່ເດືອນ / ຕໍ່ປີ.

3. ຂ້າພະເຈົ້າມີເງິນຮຸ້ນຢູ່ສະຫະກອນອອມຊັບ-ສິນເຊື່ອ ພະນັກງານທະນາຄານແຫ່ງ ສປປ ລາວ
   ຈຳນວນ...........................................................................ກີບ.

4. ຂ້າພະເຈົ້າຍັງຕິດໜີ້ຜູ້ອື່ນຢູ່ໃນຂະນະນີ້ລວມເປັນເງິນ.........................................................ກີບ.

5. ຂ້າພະເຈົ້າຕ້ອງໃຊ້ຈ່າຍພາຍໃນຄອບຄົວເດືອນລະ...............................................................ກີບ.

6. ຂ້າພະເຈົ້າຂໍຮັບຮອງວ່າຈະໃຊ້ໜີ້ຄືນພ້ອມດອກເບ້ຍພາຍໃນ.............................ເດືອນ / ປີ ໂດຍການຈ່າຍ
   ເປັນເດືອນລະ.......................................ກີບ, ອັດຕາດອກເບ້ຍ...............% / ເດືອນ / ປີ.

7. ຜູ້ຄ້ຳປະກັນຄົນທີ 1

   ຂັ້ນພະແນກ/ຂັ້ນກົມ ທີ່ຕົນສັງກັດ

   ເຊັນຢັ້ງຢືນ.......................

   ຜູ້ຄ້ຳປະກັນຄົນທີ 2 ( ສາມີ / ພັນລະຍາ / ຄອບຄົວ )

   ຊື່ແລະນາມສະກຸນ.............................
   ສາຍພົວພັນ.........................................
   ເບີໂທລະສັບ......................................
   ລາຍຮັບຕໍ່ເດືອນ...................................
   ເຊັນຢັ້ງຢືນ.........................................

ຂ້າພະເຈົ້າຂໍຮັບຮອງວ່າ ເນື້ອໃນທີ່ກ່າວມາຂ້າງເທິງນີ້ແມ່ນຄວາມຈິງທຸກປະການ, ຫາກມີສິ່ງໃດທີ່ເຮັດໃຫ້ສະຫະກອນເກີດຄວາມເສຍຫາຍຈະຂໍຮັບຜິດຊອບຕໍ່ການຈັດຕັ້ງ ແລະ ສະຫະກອນ ທຸກຢ່າງ.

ນະຄອນຫຼວງວຽງຈັນ, ວັນທີ:

ລາຍເຊັນຜູ້ກູ້ຢືມ

- ກະລຸນາຄັດຕິດຄ່າທຳນຽມແບບຟອມອະນຸມັດເງິນກູ້ 5.000 ກີບ

ທະນາຄານແຫ່ງ ສປປ ລາວ

ສອສທຫລ ເລກທີ:.....

# ໜັງສືສັນຍາຂໍກູ້ຢືມເງິນ

ຮຽນ: ຄະນະກຳມະການ ສະຫະກອນອອມຊັບ-ສິນເຊື່ອພະນັກງານທະນາຄານແຫ່ງ ສປປ ລາວ.

ຂ້າພະເຈົ້າ.............................................ອາຍຸ........ປີ, ສັງກັດຢູ່ກົມ.............................................

ໄດ້ກູ້ຢືມເງິນຈາກສະຫະກອນອອມຊັບ-ສິນເຊື່ອພະນັກງານທະນາຄານແຫ່ງ ສປປ ລາວ

ຈຳນວນ..................................ກີບ (.................................................) ແລະ ໄດ້ຮັບເງິນຈຳນວນນີ້ຄົບຖ້ວນຖືກຕ້ອງໃນມື້ທີ່ເຮັດສັນຍານີ້ແລ້ວ, ຂ້າພະເຈົ້າຂໍໃຫ້ສັນຍາຕໍ່ສະຫະກອນອອມຊັບ-ສິນເຊື່ອວ່າ:

1. ຂ້າພະເຈົ້າຕົກລົງຈ່າຍຄ່າດອກເບ້ຍໃນອັດຕາ.......................% ຕໍ່ປີ ຕາມຈຳນວນຕົ້ນທຶນທີ່ຕິດໜີ້, ຖ້າຫາກວ່າໃນຕໍ່ໜ້າ ສະຫະກອນອອມຊັບ-ສິນເຊື່ອພະນັກງານທະນາຄານແຫ່ງ ສປປ ລາວ ມີຈຸດປະສົງປັບປຸງ ອັດຕາດອກເບ້ຍເງິນກູ້ຢືມນີ້ ໃນອັດຕາທີ່ບໍ່ເກີນລະບຽບ ແລະ ກົດໝາຍກຳນົດ ແລະ ໄດ້ມີການຕົກລົງຈາກຄະນະກຳມະການ ກໍ່ຄືຄວາມເຫັນດີເຫັນພ້ອມຈາກສະມາຊິກ ຂ້າພະເຈົ້າຍິນດີປະຕິບັດ.
2. ຂ້າພະເຈົ້າສັນຍາວ່າຈະຊຳລະເງິນກູ້ຄືນໃຫ້ແກ່ສະຫະກອນ ຈຳນວນ.........................ກີບ ພ້ອມດ້ວຍດອກເບ້ຍພາຍໃນໄລຍະເວລາ...............ເດືອນ / ປີ ໂດຍກຳນົດເວລາການຈ່າຍ ດັ່ງນີ້:
   - ຊຳລະເປັນແຕ່ລະເດືອນໆລະ...............................ກີບ / ເດືອນ ພາຍໃນກຳນົດ.........ເດືອນ
   - ຊຳລະໝົດເທື່ອດຽວພາຍໃນກຳນົດ.....................ເດືອນ .
3. ຫາກຂ້າພະເຈົ້າບໍ່ຊຳລະເງິນກູ້ ພ້ອມດອກເບ້ຍ ຕາມທີ່ໄດ້ລະບຸໄວ້ໃນຂໍ້ 2 ຫຼື ກໍລະນີໃດໆດັ່ງກ່າວໃນກົດລະບຽບ ຂອງສະຫະກອນ ຂ້າພະເຈົ້າຍິນດີໃຫ້ສະຫະກອນດຳເນີນການທວງໜີ້ໂດຍບໍ່ມີຂໍ້ອ້າງໃດໆ.
4. ຂ້າພະເຈົ້າຍິນດີເອົາ ເງິນເດືອນ, ບັນດາຊັບສິນ, ສິດ ແລະ ຜົນປະໂຫຍດ ຂອງຂ້າພະເຈົ້າຄ້ຳປະກັນໃນການກູ້ຢືມເງິນໃນຄັ້ງນີ້ ເພື່ອໃຊ້ໜີ້ຄືນຈົນກວ່າຈະຄົບຕາມຈຳນວນ.

ດັ່ງນັ້ນ, ຂ້າພະເຈົ້າຈຶ່ງເຮັດສັນຍາສະບັບນີ້ໄວ້ເພື່ອເປັນຫຼັກຖານ.

ນະຄອນຫຼວງວຽງຈັນ, ວັນທີ:

ຊື່ແຈ້ງ ແລະ ລາຍເຊັນພະຍານ ລາຍເຊັນຜູ້ສັນຍາ

(ສາມີ / ພັນລະຍາ / ຄອບຄົວ)

# ບົດບັນທຶກ ການອະນຸມັດເງິນກູ້ຂອງຄະນະກຳມະການສະຫະກອນອອມຊັບ ທຫລ

ສະຫະກອນອອມຊັບ-ສິນເຊື່ອ
ພະນັກງານທະນາຄານແຫ່ງ ສປປ ລາວ

ເລກທີ່:.........../ສອສພ ທຫລ
ວັນທີ....../........./............

- ອີງຕາມໃບສະເໜີຂໍກູ້ຂອງສະມາຊິກເລກທີ........./ສອສພທຫລ, ລົງວັນທີ........../........../.............

1. ຈຸດປະສົງຂອງການກູ້ຢືມ:
   - ມີຄວາມຈຳເປັນແທ້ ☐, ໜ້າສະໜັບສະໜູນ ☐, ມີຄວາມສ່ຽງ ☐, ບໍ່ສົມຄວນອະນຸມັດ ☐ ແລະ ເຫດຜົນອື່ນໆ.
2. ຄຸນສົມບັດ/ປະຫວັດຂອງຜູ້ກູ້ຢືມ:
   - ຄຸນສົມບັດ ☐, ຄຸນສົມບັດປານກາງ ☐, ຄຸນສົມບັດດີຫຼາຍ ☐, ມີຄວາມຮັບຜິດຊອບສູງ ☐
3. ຄວາມສາມາດໃນການໃຊ້ແທນຄືນ:
   - ມີບັນຫາ ☐, ປົກກະຕິ ☐, ດີ ☐, ດີຫຼາຍ ☐,ບໍ່ເຄີຍມີບັນຫາໃນການຊຳລະຄືນ ☐, ອື່ນໆ...
4. ການຄ້ຳປະກັນເງິນກູ້:

   4.1 <u>ດ້ວຍຊັບສິນມີຄ່າ:</u>
   - ຍັງບໍ່ທັນພຽງພໍ ☐, ໄດ້ສ່ວນໃດສ່ວນໜຶ່ງ ☐, ຮັບປະກັນ ☐, ພຽງພໍ ☐, ຄຸ້ມໄດ້ທັງໝົດ ☐

   4.2 <u>ດ້ວຍບຸກຄົນສະມາຊິກຄ້ຳປະກັນ:</u>
   - ບໍ່ໜ້າເຊື່ອ ☐, ເປັນທີ່ໜ້າເຊື່ອຖື ☐, ເປັນຄະນະເປັນການນຳ ໃນອົງການຈັດຕັ້ງ ☐

   4.3 <u>ດ້ວຍກຸ່ມສະມາຊິກແຕ່ 2 ຄົນຂຶ້ນໄປຄ້ຳປະກັນ:</u>
   - ບໍ່ເປັນທີ່ໜ້າເຊື່ອຖື ☐, ບໍ່ພຽງພໍ ☐, ພຽງພໍ່ ☐, ຮັບປະກັນ ☐, ແລະອື່ນໆ...
5. ເຫດຜົນ ແລະ ຂໍ້ຄິດເຫັນອື່ນໆ..........................................................................................

   ..........................................................................................................................

ດັ່ງນັ້ນ, ຄະນະກຳມະການເງິນກູ້ຈຶ່ງລົງມະຕິວ່າ: ອະນຸມັດ ☐, ບໍ່ອະນຸມັດ ☐ ໃຫ້ຜູ້ກູ່ຽວຢືມ:

ຈຳນວນຕົວເລກ:..................................................ກີບ ແລະ (ຂຽນເປັນຕົວໜັງສື)

(.................................................................................................ກີບ )

ລາຍເຊັນ ຫົວໜ້າຄະນະກຳມະການສະຫະກອນ.............................................................................,

ຮອງຫົວໜ້າຄະນະກຳມະການ (ຮັບຜິດຊອບເງິນກູ້)...................................................................,

ຄະນະກຳມະການກວດກາ.......................................................................................................,

ຄະນະກຳມະການບັນຊີ..........................................................................................................